# ພໍ່ແມ່ ກໍ ນັບຄືກັນ

## ຊ່ວຍລູກທ່ານໃນການ ສະແດງ ແລະ ຕີຄວາມໝາຍ ຂອງ ກຣາຟ ແລະ ຕາຕະລາງ

ໃນຊີວິດປະຈຳວັນຂອງພວກເຮົານັ້ນ ພວກເຮົາຕ້ອງໄດ້ເຂົ້າໃຈ ຂໍ້ມູນຕ່າງໆທີ່ສະແດງໃຫ້ເຫັນຢູ່ໃນກຣາຟ ແລະ ຕາຕະ ລາງ. ພວກເຮົາເຫັນຂໍ້ມູນນີ້ຢູ່ຕາມໜັງສືພິມ ແລະ ຕາມປື້ມນ້ອຍ ໃຫ້ຂໍ້ມູນຕ່າງໆ ຕາມໃບເກັບເງິນ ແລະ ຢູ່ຕາມໂທຣະທັດ. ກຣາຟ ສາມາດເຮັດໃຫ້ເປັນການງ່າຍຂື້ນໃນການ ບັນທຶກແລະຕີຄວາມໝາຍ ຂໍ້ມູນຕ່າງໆພ້ອມທັງຊ່ວຍພວກເຮົາໃນການຄາດກະລ່ວງໜ້າ ເຊັ່ນ ການຄາດກະ ອາກາດ ອັດຕາດອກເບັ້ຍ ແລະ ຄ່າໃຊ້ໄຟຟ້າໃນ ເຮືອນເຮົາໃນອະນາຄົດ. ບັນດາເດັກນ້ອຍບໍ່ພຽງແຕ່ຈະຮຽນ ອ່ານ ແລະ ຕີຄວາມໝາຍຂອງກຣາຟແລະຕາຕະລາງໃນຊົ່ວໂມງຮຽນເລກເທົ່ານັ້ນ ແຕ່ວ່າຍັງຕ້ອງຮຽນຢູ່ໃນ ຊົ່ວໂມງຮຽນວິທຍາສາດອະນາໄມ ແລະ ຊົ່ວໂມງຮຽນອື່ນໆອີກນຳ.

## ພວກເດັກນ້ອຍຮຽນເຮັດ ແລະ ຕີຄວາມໝາຍກຣາຟ ແລະ ຕາຕະລາງຢ່າງໃດ?

ຕາມທັມມະດາແລ້ວ ພວກເດັກນ້ອຍຈະສ້າງກຣາຟດ້ວຍການເກັບ ກຳເອົາຂໍ້ມູນຈາກຕາຕະລາງ ແລ້ວໃຊ້ວັດຖຸຫຼືຮູບຕ່າງໆເພື່ອບັນ ຍາຍຂໍ້ມູນນີ້ເປັນແບບກຣາຟ. ຕາມປົກກະຕິ, ຕອນອາຍຸຍັງນ້ອຍ ນາຍຄຣູຈະໃຫ້ພວກເດັກນ້ອຍເກັບກຳ ແລະ ບັນທຶກຂໍ້ມູນກ່ຽວກັບ ພວກເຂົາເອງ ເຊັ່ນວ່າ ສັດລ້ຽງທີ່ພວກເຂົາມີ ຫຼືກ່ຽວກັບສະພາບ ແວດລ້ອມຂອງພວກເຂົາ ເຊັ່ນ ສີຂອງຣົດຕ່າງຢູ່ ທີ່ລານຈອດຣົດ. ຢູ່ໃນກຣາຟຕອນພວກເຂົາຍັງນ້ອຍນັ້ນ ຮູບໆນຶ່ງແມ່ນແທນວັດຖຸ ອັນນຶ່ງ.

ພາຍຫຼັງມາ, ພວກເດັກນ້ອຍຈະຮຽນໃຊ້ການບັນທຶກຄະແນນ (ຕົວຢ່າງ 𝍸 III) ເພື່ອລາຍງານຜົນຂອງ ການສຳຫຼວດ. ນອກຈາກນີ້ ພວກເຂົາອາດຈະຖືກຂໍໃຫ້ໃຊ້ການ ບັນທຶກ ຄະແນນນີ້ອີກແບບ ນຶ່ງ ຕົວຢ່າງວ່າ ໃຊ້ບັນທຶກຈຳນວນຣົດ ທີ່ຂັບຜ່ານ ໂຮງຮຽນໄປ ພາຍໃນລະຍະ ເວລາທີ່ກຳນົດໃຫ້. ພວກເຂົາຍັງຈະຖືກແນະນຳໃຫ້ຮູ້ຈັກກຣາຟ ແບບຕ່າງໆ ຮວມທັງ ກຣາຟເປັນແບບເສົາ ກຣາຟເປັນເສັ້ນ ແລະ ກຣາຟ ເປັນແບບແບ່ງເປັນສ່ວນ. ມັນເປັນ ສິ່ງສຳຄັນທີ່ພວກ ເດັກນ້ອຍຕ້ອງ ຮູ້ຈັກຕີຄວາມໝາຍກຣາຟ ແລະ ສາມາດ ບົ່ງບອ ກວ່າກຣາຟສາມາດຕີຄວາມໝາຍຂໍ້ມູນແບບ ຜິດໆ ໄດ້ຢ່າງໃດ.



## ທ່ານເຮັດຫຍັງໄດ້ແດ່ຢູ່ບ້ານ?

- ວັດແທກຄວາມສູງແລະນໍ້າໜັກຂອງລູກທ່ານ ແລະ ຕິດຕາມ ການປ່ຽນແປງຕາມຊ່ວງເວລາຢູ່ໃນ ກຣາຟ.
- ເທື່ອໜ້າ ຖ້າທ່ານເຫັນກຣາຟຢູ່ຕາມໜັງສືພິມທີ່ມີຫົວຂໍ້ທີ່ອາດ ຈະເປັນທີ່ສົນໃຈຂອງລູກທ່ານ ຈົ່ງນັ່ງກັບລູກທ່ານ ແລະ ພະຍາ ຍາມຕີຄວາມໝາຍກຣາຟນັ້ນນຳກັນ. ເຮັດວຽກນຳກັນເພື່ອ ຕອບຄຳຖາມຕ່າງໆເຊັ່ນ: *ກຣາຟນີ້ບອກຫຍັງແກ່ເຮົາ? ພວກເຮົາຈະຮູ້ໄດ້ຢ່າງໃດວ່າຂໍ້ມູນນີ້ເປັນ ຄວາມຈິງ? ມີວິທີອື່ນ ທີ່ຈະລາຍງາຍຂໍ້ມູນນີ້ບໍ? ມີຫຍັງທີ່ລູກບໍ່ເຂົາໃຈບໍ?*


Lao

Curriculum K–12 Directorate, © NSW Department of Education



- ໃຫ້ເອົາໃບບິລເກັບເງິນທີ່ມີກຣາຟໃຫ້ລູກທ່ານເບິ່ງ ເຊັ່ນ ໃບບິລຂອງນໍ້າ ຫຼື ໄຟຟ້າ ແລະ ຕັ້ງຄໍາຖາມຖາມລູກທ່ານ ເຊັ່ນ: ພວກເຮົາໃຊ້ນໍ້າໜ້ອຍຫຼືຫຼາຍກວ່າເກົ່າຖ້າ ປຽບໃສ່ໃບບິລອັນກ່ອນ? ພວກເຮົາຈະປະຢັດນໍ້າຫຼາຍຂື້ນໄດ້ຢ່າງໃດ? ເຈົ້າຄິດວ່າການໃຊ້ນໍ້າຂອງເຮົາຈະຫຼຸດລົງຫຼາຍສໍ່າໃດຖ້າເຮົາ ເຮັດແບບນີ້? ເຈົ້າຄິດວ່າເຮົາຈະປະຢັດເງິນໄດ້ຫຼາຍສໍ່າໃດ?
- ຮ່ວມກັນກັບລູກທ່ານ ສືບຕໍ່ຕິດຕາມເບິ່ງເວລາທີ່ເຂົາໃຊ້ ເບິ່ງ ໂທຣະທັດ. ໃນຕອນທ້າຍຂອງອາທິດເບິ່ງວ່າຖ້າຫາກທ່ານສາ ມາດເຮັດກຣາຟນໍາກັນເພື່ອສະແດງໃຫ້ເຫັນເວລາທີ່ເຂົາໃຊ້ ເບິ່ງ ໂທຣະທັດ.
- ຫຼີ້ນເກມຕ່າງໆ ເຊັ່ນ ເກມ ໂອຊິ້ນ(ເຈັ້ຽ,ມີດຕັດ,ຄ້ອນຕີ) ກັບລູກທ່ານແລະໃຊ້ການເກັບຄະແນນເພື່ອບັນທຶກການ ເສັຍແລະການຊະນະ.
- ຮ່ວມກັບລູກທ່ານ ອ່ານແລະປຶກສາຫາລືຂໍ້ມູນເຣື່ອງການແຂ່ງ ກິລາ ທີ່ສະແດງໃຫ້ເຫັນຢູ່ໃນຕາຕະລາງ.
- ອ່ານໜັງສືຂໍ້ມູນກັບລູກທ່ານ ແລະ ປຶກສາຫາລືເຣື່ອງຕາ ຕະລາງ ແລະກຣາຟທີ່ມີຢູ່ໃນໜັງສືນັ້ນ.
- ສະແດງໃຫ້ລູກທ່ານຮູ້ວ່າຈະຫາແລະໃຊ້ຕາຕະລາງຂອງ ຫົວຂໍ້ ທີ່ຢູ່ໃນໜັງສືໄດ້ຢ່າງໃດ.
- ແຕ້ມຕາຕະລາງຂອງກິຈກັມທີ່ລູກທ່ານໄດ້ເຮັດແລ້ວພາຍໃນອາ ທິດເຊັ່ນ ການຝຶກກິລາ ການຮຽນດົນຕຣີ ຫຼື ລອຍນໍ້າ ການເຮັດວຽກເຮືອນ ຫຼື ເວລາພິເສດຕ່າງໆພາຍໃນອາທິດເຂົ້າໂຮງຮຽນ ເຊັ່ນ ຫ້ອງສມຸດ ຄອມພິວເຕີ້ ກິລາຢູ່ໂຮງຮຽນ ແລະ ການໃຊ້ບໍຣິການທະນາຄານ.

